# ນ້ຳໃຈ



ຮຸ່ງອະລຸນ ແດນວິໄລ

# ນ້ຳໃຈ

ບົດກະວີຂອງ

ຮຸ່ງອະລຸນ ແດນວິໄລ

ຈັດພິມໂດຍ

ວາລະສານ ວັນນະສິນ

1993

ຊື່ປຶ້ມ : ນ້ຳໃຈ

ຜູ້ແຕ່ງ : ຮຸ່ງອະລຸນ ແດນວິໄລ

ສະຫງວນ ລິຂະສິດ

ພິມດີດ : ນາລີ, ສົມພອນ

ພິມເທື່ອທີໜຶ່ງ 1993

ພິມທີ່ ວັນນະສິນ

ຕາມ ທພ 395/ພປ 101192

ຈພ 1.000 ຫົວ

# ຄຳນຳ

ຖ້າຫາກວ່າ ບົດກະວີ ປຽບຄືດອກໄມ້ ດອກໄມ້ທຸກດອກທີ່ຢູ່ໃນປື້ມຫົວນີ້ ເຄີຍແບ່ງບານຢູ່ໃນໜ້າ ວາລະສານ ວັນນະສິນ ຕະຫລອດຫລາຍປີມາແລ້ວ.

ມາຮອດມື້ນີ້ ວັນນະສິນ ນຳເອົາດອກໄມ້ເຫລົ່ານັ້ນມາໂຮມຮວດຮອຍ ໃຫ້ເປັນສ້ອຍມາລາ ທີ່ມີຊື່ວ່າ " ນ້ຳໃຈ" ເພື່ອຝາກໄວ້ໃນອຸທິຍານ ວັນນະຄະດີຂອງລາວ.

" ນ້ຳໃຈ " ແມ່ນຊື່ຂອງກະວີບົດໜຶ່ງ ທີ່ໂຮມຢູ່ ໃນປື້ມເຫລັ້ມນີ້ ເຄີຍໄດ້ຮັບຮາງວັນດີເດັ່ນ ໃນບັ້ນ ກວດສອບບົດ ວັນນະຄະດີ ຈັດຂຶ້ນໂດຍ ວາລະສານ ວັນນະສິນເມື່ອປີ ໑໙໙໐.

ຈຸດພິເສດ ຂອງບົດກະວີ "ນ້ຳໃຈ" ແມ່ນໃນບົດ ນີ ການເດີນເລື່ອງ ມີຕົວລະຄອນເຄື່ອນໄຫວແບບດຽວກັນກັບເລື່ອງສັ້ນເລື່ອງໜຶ່ງ ແຕ່ຫາກວ່າ ຜູ້ຂຽນໃຊ້ສຳນວນກະວີບັນຍາຍ ແລະ ເດີນເລື່ອງ ຄຸນສົມບັດອັນນີ້ ມີເປັນປະຈຳຢູ່ໃນບົດກະວີ ຂອງຊ່ວງອະລຸນ ແດນວິໄລ.

ວັນນະສິນ ຂໍມອບໃຫ້ຜູ້ອ່ານປະເມີນຄຸນຄ່າຂອງ "ນ້ຳໃຈ " ທັງໝົດ ທີ່ໂຮມໄວ້ໃນປຶ້ມຫົວນີ້.

໒໐/໑໑/໗໔

ວາລະສານ ວັນນະສິນ



# ສາລະບານ


| | | |
|---|---|---|
| 1. ແຍງແວ່ນ ຕ້ອງມືນຕາ | ໜ້າ | 1 |
| 2. ສີປາກ | " | 3 |
| 3. ຄົນຂີ້ໜ້າຮຽງ | " | 5 |
| 4. ງານຄົນ | " | 7 |
| 5. ຄວາມເຫັນ | " | 9 |
| 6. ລູກກັບແມ່ | " | 11 |
| 7. ໝໍເຖົາ | " | 14 |
| 8. ສົ້ນໃໝ່ ສົ້ນໄໝ | " | 18 |
| 9. ກະຕ່າຍປໍ້າເສືອ | " | 20 |
| 10. ລະຫວ່າງ ພືດ, ສັດ ແລະ ຄົນ | " | 25 |




11. ນົກສີໜົ່ມ ຄົນໃຈດຳ " 28
12. ນ້ຳໃຈ " 30
13. ນິທານ ກ່ຽວກັບຕົ້ນພ້າວ " 36
14. ຕຳນານຮັກ ຂອງນົກຈອກ ແລະ ດອກໄຟ " 38
15. ລືມກັບເວລາ " 40




# ແຍງແວ່ນຕ້ອງມີນຕາ

* ໃຜຢາກເຫັນຮຸ່ງຮູ້ ຮອຍດ່າງດຳແດງ ຂອງຕົນ
ວາງແວ່ນແຍງຍໍຍິກ ຍ່ານເທິງທຽມຫນ້າ
ຕາສອດແສງໃສສິ້ງ ຫລິງນຳແນນສ່ອງ
ດຳຫນອງເຮົາຫາກຮູ້ ເຫັນໄດ້ດັ່ງໃຈ

* ໃຜຢາກເຫັນຮຸ່ງແຈ້ງ ຈຸດອ່ອນບາງບິກ ຕົນນັ້ນ
ແມ່ນເພື່ອນຍໍແຍງຍິກ ຍິ້ມຄຳເຫັນໃຫ້
ຈຶ່ງຈັກຫວນເຫັນໄດ້ ທາງໄປແປງປ່ຽນ
ພຽນຕົນສົງສວ່າຍສຽງ ໄລ້ລາງລູບຫນອງ ຫັ້ນມາ

* ນອງແອ່ນ ຄັນຢາກໃຫ້ ເຫັນຮູບຮອຍຄັກ
ແອ່ນຕ້ອງໃສແສນໃສ ສ່ອງເງົາງາມແຈ້ງ
ສ່ວນຜູ້ແຍງຕາຕ້ອງ ມື່ນມ້ານອງແອ່ນ
ຄັນແມນຫລັບແຈບຈອຍ ຈູດນ້ອຍຫນຶ່ງບໍ່ເຫັນ ດອກນາ

* ເຊັ່ນວ່າ ຍາມເພື່ອນພ້ອງ ເຕືອນຕໍ່ຕຳຕິ
ຄັນຫາກເຮົາເສີຍເສຍ ຊິບໍ່ຫວນເຫັນຮູ້
ວ່າແຕ່ໂຕໂຕເລື້ອຍ ງາມເກີນກາຍອື່ນ
ຫລັບແຈບຈົມຈຸ່ມພື້ນ ຕີນເປື້ອນບໍ່ປ່ຽນແປງ ຫັ້ນແຫຼ້ວ

24/VII
ຫ້າມຈຳໜ່າຍ

ພິມຄັ້ງທຳອິດ ໃນວັນນະສິນ
ສະບັບເດືອນ ໑໘/໑໙໘໗

# ສີປາກ

* ບໍ່ແມ່ນສີແສດສົ້ວ　ເຕີມແຕ່ງແດງເຫລືອງ ນັ້ນໄດ
ບໍ່ແມ່ນສີບົວອິດ　ມຸ່ຍຄາມງາມເອ
ຫມາຍແມ່ນສີສັ້ນຊອນ　ພອນສະຫວັນວາງວາດ
ສີປາກຍານຍ່າວຍິ້ມ　ຈາເວົ້າວາດຫົວ ຫັ້ນມາ

* ສີປາກ ຍານພົບພໍ້　ຕິດຕໍ່ພົວພັນ
ລີ້ນລັ່ນວາງວາຈາ　ອ່ອນຫວານ ປານອ້ອຍ
ອອຍອີ່ມສຳນວນມົ້ນ　ຄອນເພງເພີນມ່ວນ
ອັບກ່ອນຊວນຊາບຊຶ້ງ　ເຕີມຊ້ອນຕື່ມແຖມ

* ບາງສາວ ນີແຕ່ແຕ້ມ ເຕີມແຕ່ງສີສັນ
ທາປາກແດງປານຂຽນ ແຜ່ນແພພວມແຕ້ມ
ແນມເບິ່ງຕອນຈາຕ້ານ ພໍປານຂາວຟ້າລັ່ນ
ຍິງນັ້ນສີປາກຄືວ່າໄວ້ ເທິງຫັ້ນແມ່ນບໍ່ມີ

* ສີປາກເປັນເຄື່ອງເອ້ ຕົບແຕ່ງກາຍາ
ພາໃຫ້ດຶງຈູງໃຈ ເພື່ອນແພງພົງເຊື້ອ
ໃຜກໍ່ພໍພະໄທແທ້ ຊົມເຊີຍຮັກຮໍ່
ສັງຄົມຍໍຍົກຍອງ ປະສົງພໍ້ພົບພານຫັ້ນແຫຼ້ວ

ພິມຄັ້ງທຳອິດ ໃນວັນນະສິນ
ສະບັບເດືອນ ໕/໑໙໘໘

# ຄົນຂີ້ຫມ້ອງ

* ປີນບໍ່ມີລູກໄດ້ ກະສູນລື່ນໄປເປັນ ຢູ່ລື?
ຍິງບໍ່ແນແນມທິດ ຫອນຊິຊູນເອົາເປົ້າ
ໄຫມ ບໍ່ທັນເປັນຜ້າ ລາຄາກໍຍ້າຕ່ຳ
ຄຳບໍ່ຕີແຕ່ງເອ້ ຍັງເປັນກອນຢູ່ດິນ

* ອັນວ່າ ຄົນມີດພ້າ ບໍ່ພານພົບຫີນຝົນ ຫັ້ນນາ
ປະປ່ອຍ ດົນນານຫລາຍ ຫລ່ຽນຄົນເລີຍຫລູ້ຍ
ຄົນບໍ່ຝົນຝັງຫມ້ຽງ ສະຫນິມຫນາຕິດໂອບ
ມີວຽກງານ ຢາກໃຊ້ ຟັນໄດ້ ແຕ່ເມື່ອຍແຮງ
ຫັ້ນແຫລ້ວ

* ຊີວິດຄົນບໍ່ເຕື້ອງ ຕີງຕໍ່ຫາຣຽນ
ຮອດວ່າ ປັນຍາສູງ ສະຫລາດເກີນກາຍແລ້ວ
ມີເພື່ອນເຕືອນພຽງນ້ອຍ ພັດຕຶງຕັງຂຶງຄຽດ
ຫາວ່າສອນສັ່ງແຂ້ ລອຍນ້ຳນານນະທີ ຈິ່ງຊັ້ນ

* ຄັນວ່າ ຄົນແບບນີ້ ມັນໝື້ໂງ່ງົ້ມຫາວ ແສນ
ຕົກບວກຕົມຕານົວ ມືດບໍ່ເຫັນຫຍັງໄດ້
ເຮັດວຽກໃດກໍເຫຍິງຫຍຸ້ງ ຍຸງໄຍຍຸ້ງໝາກບວບ
ຊີວິດຄົນຂື້ໝັ້ນຮຽງ ຟືນໄມ້ແກນກະຍຸງ.

ພິມຄັ້ງທຳອິດ ໃນ ວັນນະສິນ
ສະບັບເດືອນ 7/1988.

# ງາມຄືນ

* ງາມຄືນ ບໍ່ຢູ່ບົນບ່ອນເບື້ອງ    ເຄື່ອງນຸ່ງນຳສະໄຫມ
ງາມຄືນງາມພາຍໃນ    ແກ່ນໃຈຈິງນັ້ນ
ຮ້ອຍຫລີພັນຂອງເອ້    ແສນສີສວຍໃສ
ຄູນສົມບັດບໍ່ໃຫ້    ງາມໄດ້ບ່ອນຈັ່ງໃດ ?

* ຊາດທີ່ ດວງດອກໄມ້    ໄຂກີບເບີຍບານ ຫັ້ນມາ
ລືມບໍ່ມາພານພັດ    ກິ່ນເພີຍໃຜຊິຮູ້
ລືມບໍ່ຊູຊ້ອນຕອງ    ລະອອງປິວເປັນຝຸ່ນ ຫອມນັ້ນ
ຮອດບໍ່ຊູນຊາບຊຶ້ງ    ດຶງນ້ອມຫນ່ຽວໃຈ

ຜູ້ໃດແຫລ້ວ

* ໄດ້ດັ່ງມວນແນກໄມ້ ຍືນໃຫຍ່ ຍູງ ຍາງ
ບາງລຳໂກນກາງກົກ ນອດແນງມັນຫມັ້ນ
ຫອຍໂຂ່ງມີພຽງປີ້ ໃຜນໍນຶກຢາກຈູບ
ຮູບນອກຫມາກເດື່ອກ້ຽງ ດຳຊ້ອນເຊື່ອງໃນ

* ສົມຍາລັກ ບອກໄວ້ ໃນ–ນອກແນວສະຫນິດ
ຄືນັ້ນ

ງາມໃຈງາມແນວຄິດ ວາດກະທຳຫຼຽມເນື້ອ
ງາມກອນກັບມູນເຊື້ອ ງາມໃນໃຜ່ຳຊາ
ງາມບໍ່ເຫີຍເຫືອດແຫ້ງ ຝົນແລ້ງເລົ່າບໍ່ມາຍ

* ຄວາມສາມາດແມ່ນໄມ້ ຫລາໄລ່ລວງເລິກ–ງາມນັ້ນ
ຄຸນສົມບັດເປັນຊິງ ຊົ່ງຄວາມງາມນັ້ນ
ພົວພັນ ກັ້ນກຽວກຽວ ເກາະກັນກົມກ່ອມ
ຈຶ່ງຄ່ອຍ ແຍງຍົກຍ້ອງ ງາມແຈ້ງສ່ອງໃສ.

ພິມຄັ້ງທຳອິດ ໃນວັນນະສິນ
ສະບັບເດືອນ 8/1988

# ຄວາມເຫັນ

* ແມງວັນວ່າ

"ວຽງຈັນຄວນອາບເອ້ ແສນສິ່ງສົກກະປົກ ງາມໄດ້
ທຸກຢ່າງຄວນມີຄົບ ຊະຊາຍຂຸມເປື້ອນ
ດິນຄວນອຸດົມດ້ວຍ ຂອງຄາວແມວເນົ່າ
ພ້ອມພ່ຳກອງຂີ້ເຫຍື້ອ ຄວນໃຫ້ຫລາກຫລາຍ"

* ຍຸງລາຍວ່າ

"ຄວນໃຫ້ມີບວກນ້ຳ ຕາມເດີ່ນຮຽງເຮືອນ
ຂອງເສດຂຸມປ່ອງໂປະ ໂຕ່ງຝົນຂັງນ້ຳ
ແຄມທາງຄວນມີຫຍ້າ ຍາວສູງແສນແຕ່ງ
ໃນເຮືອນອູ່ແອ່ງນ້ຳ ໄຂ່ໄວ້ອູ້ວັນ"

* ໜູວ່າ

"ຕາມເຮືອນຊານກໍ່ໃຫ້ ຈັດແຈ່ງຄືກັນ
ເຮັດໃຫ້ມັນລຽງລັງ ຢັ່ງຢາຍຂອງໃຊ້
ເຄື່ອງຂອງເຮືອນເຮົາໃຫ້ ກອງກັນອິນໄຂວ່
ໃນແຈເຮືອນຮົກເຮື້ອ ໂຮມໄວ້ແປດປົນ

* ແມງມຸມວ່າ

"ບໍ່ຕ້ອງປັດກວາດພື້ນ ຝາພໍ່ ເພດານ
ປ່ອຍໃຫ້ມັນມົວໝອງ ດ່າງດາວດຳເປື້ອນ
ຈົ່ງບໍ່ເປືອງເງິນຊື້ ສີທາ–ຝອຍກວາດ
ງານເພາະຝອຍຝຸ່ນເອ້ ໄຍຫຍຸ້ງຍາບຍອຍ"

* ຄົນເອີຍ...ຄວາມຄຶດເຈົ້າ ມີດັ່ງໃດເດ

ເຫັນສົມຄວນຄືເຂົາ ບໍ່ມີແນວນັ້ນ
ຄັນບໍ່ເຫັນດີດ້ວຍ ຄືເຂົາກອຍກ່າວ
ເຊີນຄົນລຸກຂຶ້ນເວົ້າ ໃນຫ້ອງທີ່ປະຊຸມ ເບິ່ງດູ ?

ພິມຄັ້ງທຳອິດ ໃນວັນນະສິນ
ສະບັບເດືອນ 5/1989

# ລູກກັບແມ່

* ກັດ ເປັນເດັກໜຸ່ມນ້ອຍ ໄຮ້ແຫ່ງດຽງສາ
ອາຍຸພໍພຽງສາມ ສີ່ປີ ປະມານໄດ້
ຕິດນິໄສ ແສນດື້ ເກີນທຳມະດາແດ່
ມີໝູ່ມາບໍ່ໃກ້ ແຍລີ້ນ ເຫລືອກຕາ

* ເຮັດໃຫ້ຂຸນເພື່ອນພ້ອງ ເດີນຫ່າງກັບເຂົາ
ແໝ່ນແຕ່ ຄົນເຮືອນຮຽງ ກໍ່ແລໄກຂ້າງ
ບໍ່ມີໃຜປະສົງຫລິ້ນ ດອມກັນ ເປັນເພື່ອນ
ຄວາມປ່ຽວພອຍເຮັດໃຫ້ ກັດກຸ້ມຫງ່ອມ ເຫງົາ

* ກົດ ຈຶ່ງວາງກະທູ້ ຖາມແມ່ຂອງຕົນ
"ດ້ວຍເຫດຜົນໃດເດ ໝູ່ດຽວຂອງຂ້ອຍ
ຈຶ່ງບໍ່ສົນສະແຫວງຫລິ້ນ ຮຽງຮຽນເມີງມ່ວນ
ມີແຕ່ທຳບູດບຶ້ງ ໃບໜ້າບໍ່ບານ ?"

* ແມ່ຜູ້ບຸ້ງເກີດເກົ້າ ຄິດອອກໄວວາ
ຫາແວນມາແຍງຍົກ ບອກກົດແລຈ້ອງ
ບອກໃຫ້ລອງແຍລິ້ນ ວາງຕົນຂິງເຄັ່ງ
ເກົາຢູ່ໃນແວນແກວ ຕາຕົ໊ງຕອບຕາມ

* ແມ່ຈຶ່ງຊຸກປຽບໃຫ້ ເຫັນເຫດເຫັນຜົນ
"ຊື່ວ່າ ການພົວພັນ ເພື່ອນແພງຄວນຮູ້
ບໍ່ຕ່າງຫຍັງກັນແທ້ ແຍງເງົາໃນແວ່ນ
ເຮົາຫາກເຫັນຮູບຮ້າຍ ເຮົາໄດ້ຈາກເງົາ

* ບັດນີ້ລູກຈົ່ງຍິ້ມ　　ແຍງແວ່ນລອງດູ
ຮູ້ວ່າ ເງົາເນົາໃນ　　ແວນວົງຊິວາງຍິ້ມ
ບໍ່ຫອນອິງອັງອໍ້　　ຄາວຄົນຍິ້ມຍື່ມ
ໃນການພົບເພື່ອນພ້ອງ　　ສັນນີ້ແນ່ນອນ "

* ກັດ ຟັງຄຳໝ່ແລ້ວ　　ສຳນຶກໃນໃຈ
ນອງລ່ວງເຫັນຄວາມຈິງ　　ຊູ່ອັນຈົງແຈ້ງ
ເອົາຄ່ອຍ ໄຂຮ່ອຍຍິ້ມ　　ງາມປານບົວແບ່ງ
ເວົ້າເອົາ ໃນແວ່ນແກ້ວ　　ໄຂຍິ້ມຕອບຕາມ.

ພິມຄັ້ງທຳອິດ ໃນວັນນະສິນ
ສະບັບເດືອນ 7/1989

## ຫມໍເດົາ

* ໄດ້ສາມວັນຜ່ານພົ້ນ ເດັກຊື່ຄືສົມຊາຍ
ໄຂ້ ປ່ວຍ ຈົງຈອງເຈັບ ຈ່ອຍລົງເລີງເລື້ອຍ
ເຮັດໃຫ້ ນາງແພງຜູ້ ນານດາແສນໂສກ
ວັນໜຶ່ງ ມີຂ່າວຂື້ ຄິນເຖົ້າຫຽວເຖິງ

* ຊ່າວ່າ ມາຈາກບ້ານ ແດນດ່ານດົນໄກ
ມາພັກເຮືອນລຸງສີ ສີ່ວັນວຽນໄດ້
ອັດສະຈັນໃຈເຖົ້າ ເດີນດຽວດັ້ນດ່ຽວ
ຕາຍັງເຫັນຮຸ່ງຮັ້ງ ທາງກ້າວຫ່ອງຫຽວ

* ຈ່າວ່າ ຄົນຜູ້ນີ້ ເກີນເກົ່າການດູ
ສານາຄມຂອງທາເຫັນ ເຫດການໄກໃກ້
ນາງແພງຂົນຂວາຍໄດ້ ມີທຽນທັງຫຼູບ
ມີຄົບຂັນດອກໄມ້ ໄປໄຫວ້ຕໍ່ໜໍ

* ຍີ່ຍົມຂັນດອກໄມ້ ທຽນຫຼູບບູຊາ
ເງິນຄາຍຄົບ ສົ່ງທາໂທນເຖົ້າ
ແລ້ວເລົ່າຄວາມເຄືອງຂ້ອງ ຂອງນາງນ່ຳບອກ
ໂທນກໍ່ລົງເລກແລ້ວ ຊູນແຕ້ມໄລ່ຍາມ

* ທວາຍວ່າ ຜີປູ່ຕົ້ນ ຕາມໃຫຍ່ປ່າຍມາ
ເພິ່ນທາກມີ ຄວາມເຄືອງ ຄຽດແຮງຮຸນຮ້າຍ
ຄອບວ່າ ສົມຊາຍນ້ອຍ ມືແບນໃຈຖອຍ
ຍິງກັບຖຸ່ມໃສ່ຮ້ານ ເຮືອນເຕ້ຍຫູບຜີ

* ນາງແພງກັບສູ່ບ້ານ ພານພົບພົວແພງ
ຕຽມພາຫວານ ພ່ຳຄາວຄອງຖ້າ
ນາງແປກໃຈເລີຍເວົ້າ ຖາມພົວຟ້າວຟັ່ງ
ເຈົ້າຫາກຈັດແຈງທາງ ພາເຂົ້າເພື່ອຫຍັງ ?

* ພົວວ່າ ຕອນຫວ່າງເຊົ້າ ຮຽນຫາກໄປຫາ
ໂຫນສ່ອງ ຍາມເຫັນຄັກ ບ່ອນຄວນກັ້ນແກ
ໂຫນວ່າ ສົມຊາຍໄຂ້ ເປັນນ້ຳພີໄຮ່
ບ່ອນກົກໄຮ ສີ່ຕົ້ນ ໂພນນ້ອຍລຽບຖຽງ

* ພຽງເຮົາມີໄກ່ຕົ້ມ ເຕີມແຕ່ງເຕັມພາ
ຫາອາຫານຫວານຄາວ ຊູ່ແນວນ້ຳຕອນ
ມີທັງເຫລົ້າ ຂອງເມົາມ່ວນມອບ
ໃຫ້ແກ່ພີໄຮ່ແລ້ວ ບູດນ້ອຍຊີສວ່າງເຊົ້າ

* ນາງແພງຍິນດັ່ງນັ້ນ ໃຈແຮ່ງຫິນຫວາຍ
ຄິດຫ່ວງນຳສົມຊາຍ ລູກແພງພວມໄຂ້
ນາງຈຶ່ງໄຂຄວາມອົ້ນ ຖາມຜົວເຕີມຕໍ່
ຫມໍມໍຄົນພີ່ເວົ້າ ເຖິງນັ້ນຢູ່ໃສ ?

* ຜົວຈຶ່ງໄຂຂ່າວໃຫ້ ຮູ້ຮ່ອມຄວາມຈິງ
ໂຫນຫາກເປັນໄທໄກ ທຽວເຖິງແຖວນີ້
ລູງສິເປັນຄົນໃຫ້ ໂຫມນອນເຮືອນເພິ່ນ
ນາງແພງອ້າປາກຄ້າງ ຕາຕັ້ງຕື່ນຕະລຶງ

ພິມຄັ້ງທຳອິດໃນວັນນະສິນ

ສະບັບເດືອນ 11/1989.

# ສິ້ນໃໝ່ ສິ້ນໄໝ

| | |
|---|---|
| * ສິ້ນໃໝ່ ສີອາດເອັ | ລາຍແຕ່ງທັນສະໄໝ |
| ສິ້ນໄໝ ມູນມານດາ | ບໍ່ໃໝ່ປານໃດແລ້ວ |
| ສິ້ນໃໝ່ ໂຮງງານສາວ | ພັນຜືນບໍ່ພໍເມື່ອຍ |
| ສິ້ນໄໝ ນິຍົມສາວ | ສາມເຕີມຜືນ |

| | |
|---|---|
| * ສິ້ນໃໝ່ ມືອວດອ້າງ | ເອີ້ນວ່າຄືນມີ |
| ສິ້ນເກົ່າ ຄືນແພງສິນ | ຈົ່ງຫວນຫາໄວ |
| ສິ້ນໃໝ່ ງາມສີແຕມ | ແດງເຫລືອງຂຽວແສດ |
| ສິ້ນເກົ່າ ງາມບ່ອນເສັ້ນ | ໄໝກ້ຽວສອດສິ້ນ |

* ສິ້ນໃໝ່ ກຳເນີດຂຶ້ນ    ຄຽງຄູ່ຄວາມຈະເລີນ
ສິ້ນໄໝ ແຮວງາມຄືນ    ຕ່ຳຕາມໃນບ້ານ
ສິ້ນໃໝ່ແຮວໄຟຟ້າ    ພຽງຄືນບີບປຸ່ມ
ສິ້ນໄໝຝີມກໍພ້ອມ    ຄືນໄດອອກແຮງ

* ສິ້ນໃໝ່ມີເພື່ອໄວ້    ຄຽງຄູ່ສາວສະໄໝ
ສິ້ນເກົ່າເປັນມູນເມືອງ    ບອກຄວາມຫລັງໄດ້
ສິ້ນໃໝ່ເຕືອນເຫັນຮູ້    ສັງຄົມສະໄໝໃໝ່
ສິ້ນໄໝພື້ນເກົ່າແລວ    ຄົງເຂັ້ມຄ່າສິນ

ພິມຄັ້ງທຳອິດ ໃນ ວັນນະສິນ
ສະບັບເດືອນ ໕ / ໑໙໙໐

## ກະຕ່າຍຂ້າເສືອ

* ຍັງມີກະຕ່າຍນ້ອຍ ເນີ່າປ່າໄພຫນາ
ວັນຫນຶ່ງຕອຍຢອຍເລາະ ລຽບຫາກິນຫຍ້າ
ບັງເອີນພູ້ ເສືອລາຍໂຕໃຫຍ່
ກະຕ່າຍຢານ ຢືນນັ້ງບໍ່ຕິງ

* ເສືອໃຫຍ່ຮູ້ ເລີຍລັ່ມສຽງມັນ
ກະຕ່າຍເອີຍມຶງມັນ ຕ່ຳຕອຍໂຕນອຍ
ສັ່ງວ່າມຶງເດີນຜາຍ ກາຍມາໃນປ່າ ກູນີ້
ກູບໍ່ປະປ່ອຍໃຫ້ ມຶງໄດອອກໄປ ງາຍແລ້ວ

* ເຊີນນ້ອງມາຮໍດປ້າ    ຂັ້ນແຂ່ງລອງແຮງ ກັບກູ
ຄືນແມ່ນກູເສຍໄຊ    ຊິປ່ອຍໄປໄກໄດ
ຫາກວ່ານ້ອງເສຍແທ    ກູໄຊຊະນະໃຫຍ່
ແມ່ນກູຈັບໂມ່ນຫາຍຄ້ຳ    ນ້ອງໄດດັ່ງໃຈ

* ກະຕ່າຍໄດ້    ໄຂ່ໃສ່ສຽງໃສ
ມີພຽງເຮົາສອງໂຕ    ຫ່ອນໃຜເຫັນໄດ
ເຮົາຄວນໄປຫາຜູ້    ເປັນທຳມາລ່ຳ
ຂອຍຊິທຳໃຫ້ເຈົ້າ    ລົງດິ້ນເກືອກດິນ

* ສອງຈິ່ງໄດ້    ໄປສູ່ຕີນພູ
ພາກັນເລາະ    ປ່າຊາງເຖິງຊາງ
ຊວນເອົາຊ້າງ    ສານເດີນໄປເດີ່ນ
ວານບອກໃຫ    ເປັນຜູ້ຢູ່ດູ

* ຊ້າງຮັບຮູ້
ບອກໃຫ້ສອງລອງແຮງ
ສອງຂາໜ້າ
ກະຕ່າຍອ້າງວາດເວົ້າ

ເລີຍສິ່ງສຽງດັງ
ຕ່ອຍຕຳຕີປ້ຳ
ເສືອຊູ້ຂົ່ນຊູ
ກິນລໍ້ບໍ່ລໍ

* ເສືອເອີຍຂ້ອຍເບິ່ງເຈົ້າ
ຄັນຊິລຶງລາຍມວຍ
ຍັງທໍ່ສິງໃສແທ
ຢ້ານແຕ່ເຈົ້າ

ແລ້ວແຮງທີ່ມແຮງ
ຕ່ອຍຕີຍາມນີ້
ຄວາມຈິງບາງສິ່ງ
ບັງບຽວຢ່າງດຽວ

* ດັ່ງນັ້ນ ຂໍຝ່າຍເຈົ້າ
ຊິໃຫ້ ເອົາເສືອລຶງ
ເອົາມອນຂວ້າ
ມອນຈົ່ງໃດຈົ້ງເອັນ

ໄຂກາວກັບເຮົາ ເບິ່ງທ້ອນ
ທ່າໃດນອນໄວ
ແຄງຫງາຍຄີ່ງາຍ ແຫ້ນໍ່
ເຮົາໄດ້ຮັບໄຊ ບໍ່ຮູ້ ?

24 / ขาย
ห้ามจำหน่าย

* ນຶງໂງ່ແທ້ ຍັງຮ່າວສາມຫາວ
ເສືອກ່າວທັງນອນລົງ ບໍ່ນານຍາມນັ້ນ
ມັນທັງເວົ້າ ສຽງດັງຟາວຟັ່ງ
ຄັນກູນອນຈັ່ງຊີ້ ນຶງໄດຮັບໄຊ ໂລດນາ

* ກະຕ່າຍນ້ອຍ ເລີຍບໍ່ລື້
ໄຂສຽງໃສ ບອກໄຊເຮົາໄດ້
ເສືອລາຍລົ້ມ ລົງດິນຫົວປີ່ນ
ສະໝອງເຮົາເຮັດໃຫ້ ມັນລົ້ມເກືອກຕົມ ແລ້ວເດ

* ເສືອຢາກຮ້າຍ ຄວາໃສ່ໂດຍໄວ
ທັນແຕ່ພຽງຈັບຫາງ ຝ່າຍກົງກັນຂ້າມ
ມັນດຶງຫົ້ນ ທັງແຮງຂຶ້ນຄຽດ
ກະຕ່າຍຫາງຂາດສັ້ນ ຈົນເທົ່າທຸກວັນ

* ທາງຝ່າຍຊ້າງ
ຈົມວ່າຕາໂຕຫົບ
ຄອບວ່າຫົວຂວັ້ນອາຍ
ກະຕ່າຍໂຕນ້ອຍໆ

ເຫັນເຕດເລີຍຫົວ
ຕີບລົງໄປຍອມ
ເສືອລາຍໂຕໂງ່
ຫົວສ້ຽມສ່ອງໃສ ແຫມ້.

ພິມຄັ້ງທໍາອິດ ໃນວັນນະສິນ
ສະບັບເດືອນ ຜ໌/໑໙໙໐

# ລະຫວ່າງພືດ,
# ສັດ ແລະ ຄົນ

* ມວນໝາກໄມ້ ງາມງອກໃບຂຽວ
ມີສາຍລົມ ແດດຝົນໂລມໄລ້
ມີຝຸ່ນບຳລຸງລ້ຽງ ພຽງພໍພາໃຫຍ່
ມີດອກບານອາດເອ້ ໂຮຍໃຫ້ກິ່ນຫອມ ງາມແລ້ວ

* ສ່ວນວ່າ ສັດໃຫຍ່ນ້ອຍ ມີຢູ່ມີກິນ
ມີຍາມນອນ ຜ່ອນຄີງຄາວຮ້ອນ
ເພື່ອວ່າມີຄີງເຂັ້ມ ແຂງແຮງກາຍແກ່ນ
ຊູຊີບຍັ້ງ ຍືນໄດ້ເດັ່ນງາມ ຊອບແລ້ວ

* ຄົນເຮົາກິນເພື່ອໃຫ້ ຄີງໃຫຍ່ ສົມບູນ
ມີແຮງເຮັດ ວຽກງານການສາງ
ຜິວພ່ອງໂສມໃສກ້ຽວ ແຂນກົມເກົາລູບ
ສົມສ່ວນສ້ວຍ ງາມແລ້ວຮ່າງກາຍ ນັ້ນນໍ

* ຍັງບໍ່ແລ້ວ ຄຽງຄູ່ຄີງຄົນ
ຍັງມີອາພອນຜີນ ຕື່ນຄີງຄຽນຕຸ້ມ
ພໍດີດ້ານ ກົນກືນກັນຕື່ນ
ມີເຄື່ອງເອ້ ສາຍສ້ອຍພ່ຳແຫວນ

* ນອກຈາກນີ້ ຍັງເພີ້ມຕາມແຖມ
ຄົນຄວນມີ ຮູ່ຄີງຄວາມຮູ້
ຄວາມດີພ້ອມ ສົມທຳຄຽງຄູ່
ຈຶ່ງສົມຄວນຄ່າຄຸ້ມ ຄຳເອີ້ນວ່າ "ຄົນ" ແທ້ແລ້ວ

ຮາງວັນດີເດັ່ນ

ກວດສອບວັນນະຄະດີ (ວັນນະສິນ ປີ 1990)
ພິມຄັ້ງທຳອິດ ໃນວັນນະສິນ
ສະບັບເດືອນ 6/1991

# ນົກສີຫມົ່ນ ຄົນໃຈດຳ

* ນົກນ້ອຍໆ
ຂານໄຂສຽງ
ບາງຄາວເຕັ້ນ
ບາງເທື່ອບິນເຈີດເຈີ້ຍ

ງອຍງ່າຂາມຫວານ
ອົ່ມຂອຍຫວານຈ້ອຍ
ໄປມາຕາມງ່າ
ລອຍຫລິ້ນລ່ອງລົມ

* ຫນ້ອຍຫນຶ່ງຊ້ຳ
ຊອນສົບແດງ
ຄາວຫນຶ່ງມີຄົນເຂົ້າ
ເຂົ້ານັ້ນ ຫວັງຍື່ນໃຫ້

ລື່ມແວງອຍຄອນ
ຄາບອົມແປ້ງໃຈ
ມາຢືນຮຽງຮົ່ມ
ປີກສິ້ນອຍວອດວາຍ

* ແຕ່ນົກນ້ອຍ ຍັງສົ່ງສຽງໃສ
ໄພພານມາ ບໍ່ທັນເຫັນຮູ້
ຍັງເພີນໃຈ້ ແປງອົນສິໜື່ນ
ນິແຕ່ຄົນ ເທົ່ານັ້ນ ເປັນເຈົ້າເຫດການ

* ຄົນຜູ້ນັ້ນ ຍໍຍົກກັນຖຸນ
ຕາໝມນຳ ລໍ່ອແນເລັງເປົ້າ
ກັນຖຸນທົ້ນ ແຮງຢາງດິດສົ່ງ
ລູກຫລູດຟົ້ງ ໄປຫນ້າແຫກລົມ

* ຜິດຈາກເປົ້າ ຕຳງ່າຂາມຫວານ
ດອນຄືນມາ ບ່ອນຄົນຢືນຈັ້ງ
ນົກຕື່ນ ເລີຍບິນອົ້ນ ກາງລົມ ເຈົ້ຍເຈີດ
ຫີນຕ່ອຍຕ້ອງ ຕຳຫນ້າຜາກຄົນ

ພິມຄັ້ງທຳອິດ ໃນວັນນະສິນ
ສະບັບເດືອນ 10/1991

# ນ້ຳໃຈ

* ນ້ຳໃຈສາວຮ່າງນ້ອຍ    ອາຍຸຊາວສາມ
ຮຽນສ້າງຄູວຽງຈັນ    ຢູ່ປີສຸດທ້າຍ
ວັນໜຶ່ງ ນາງນັດກັບຊາຍຊູ້ ສາມໂມງຕອນບ່າຍ
ວ່າຈັກພາບ່າວອາຍ    ໄປຢ້ຽມແມ່ຕົນ ແລມາ

* ພໍເມື່ອ ວັນຄືບເຂົ້າ    ຄ້າຍຄ່ຳລົງແລງ
ຍັງບໍ່ເຫັນຊາຍຄົນ    ນັດກັນເອົາໄວ
ເຫຼືອແຮງນອງ    ຄອຍຊາຍຈົນຄ່ຳ
ຕາເວັນບັງປ່າໄມ້    ໄປແລ້ວຈຶ່ງມາ

* ແມ່ນອ້າຍໄປຢູ່ລາວ ລາເຄີກນຳຫຍັງ ແດ່?
ນ້ຳໃຈຖາມຫວງຫາ ເຫດຜົນນຳອ້າຍ
ເຂົ້າຈຶ່ງເຍີ່ງຄວາມໃຫ້ ນາງຟັງຫູກແວ
ວ່າອ້າຍໄປຢູ່ຢຣົມ ຄົນໄຂ້ປ່ວຍໂຊ ເພື່ອນພຸ້ນ

* ບັງເອີນໄປພົບພໍ້ ຄົນແກ່ເຈັບຫນັກ
ຖືກລົດຕຳຕາມໂຕ ຫລ່າເຫຼືອງລົງເລື້ອຍ
ຄັນຈັກຫມີນມາລາ ທຳເນີນມາຍທາງ
ຄົນເຈັບຄົງເມື່ອຍນ້ອຍ ເສຍສິ້ນຊີບໄປ ນ້ອງເອີຍ

* ອ້າຍຈຶ່ງວາງມອບໃຫ້ ຢາດເລືອດໃນກາຍ ອ້າຍນີ້
ເພື່ອຊ່ອຍຊູລົມໃຈ ແກ່ຄົນຄົນນັ້ນ
ເຫດຜົນການມາຊ້າ ຂອງຊາຍຄືສິ່ງ
ເຮັດໃຫ້ຄົນຫນຶ່ງນັ້ນ ຫວນຟື້ນຊີບຄືນ ແທ້ແລ້ວ

* ຄວາມຈິງເປັນດັ່ງນີ້ ນາງຈິ່ງເຫັນໃຈ
ຄອບວ່າ ການຈຳເປັນ ຈຶ່ງຟື້ນໃຈນ້ອງ
ພໍແຕ່ຍິນຊາຍຮູ້ ໄຂຄຳຈິ່ງກ່າວ
ນ້ຳໃຈໄຂວາດເວົ້າ ຄຳຂ້ອງຄຽດເຄືອງ

* ນາງວ່າເລືອດຫລົ່ນລ້ຽວ ໃນຮ່າງຄີງຕົນ
ສັ່ງວ່າເອົາໄປເປືອງ ບໍ່ມີຜົນໃດ
ຄືນບໍ່ເຄີຍເຫັນຫນ້າ ທຳຄຸນໄປເປົ່າ
ເຂົາບໍ່ມີຕອບໃຫ້ ເຮົາໄດ້ສິ່ງໃດ ດອກນາ

* ນ້ຳໃຈພວນກ່າວເວົ້າ ຫລາຍສິ່ງຂັ້ນທາ
ຄຳພີ່ຄືນມາ ຂ່າວໄຂນາງຮູ້
ບອກວ່ານານດ້ານ້ອງ ພວນນ້ອນປ້ວປັ້ນ
ຢູ່ໂຮງຫມໍໃຫຍ່ພຸ້ນ ຂໍໃຫ້ຮີບໄປ ແດ່ທອນ

* ຍິນແລ້ວ ນາງຟັ່ງຟ້າວ ໄປສູ່ໂຮງໝໍ
ດ້ວຍຫົວໃຈຍັງຄິດ ຄຽດແຄນຄວາມເສົ້າ
ກ້າວເຂົ້າໄປໃນຫ້ອງ ໂຮງໝໍເຖິງແມ່
ເຫັນນ້ອງສາວນັ່ງເຝົ້າ ຄຽງຂ້າງບໍ່ວາງ

* ແມ່ຍັງລຸກບໍ່ໄດ້ ນອນຢູ່ເທິງຕຽງ
ດີແຕ່ອາການເຈັບ ສ່ວາງຄາຍລົງເລື້ອຍ
ນ້ອງສາວຫລຽວເຫັນເອື້ອຍ ໄຂສຽງກອຍກາວ
ເລົ່າເຫດການຜ່ານພົ້ນ ທາງເອື້ອຍນັ່ງຟັງ

* ເລົ່າວ່າມີບ່າວອ້າຍ ຊາຍໜຶ່ງມາເຫັນ
ຕອນແມ່ພວມຈັງເຈັບ ຈ່ອງດຶງແຂງນອຍ
ເຂົາຫາກເປັນຄົນໃຫ ໂລຫິດ ຊູແມ່
ເສຍແຕ່ຂ້ອຍບໍ່ຮູ້ ເຂົານັ້ນ ແມ່ນໃຜ ເອື້ອຍເອີຍ

* ເພາະວ່ານິມິດແທ້ ເຂົາຈຶ່ງອຳລາ
ຍັງບໍ່ທັນຖາມເຖິງ ຊື່ໃດກັນແທ້
ພໍ່ຈື່ພຽງໃບຫນ້າ ລືມຄາຍຂອງເພິ່ນ
ຈຳແຕ່ຊຸມເພິ່ນສ້າງ ເອົາໄວ້ບໍ່ວາຍ

* ໃນເວລາທີ່ນ້ອງ ເພິ່ນເລົ່າສຽງໃສ
ທາງປະຕູມີຊາຍ ຫນຶ່ງພາກົດຂື້ນ
ນ້ອງສາວຫລຽວເຫັນແລ້ວ ເລີຍໄຂສຽງກ່າວ
ກ່າວດ້ວຍໃຈຕື່ນເຕັ້ນ ເຊີນອ້າຍນັ່ງລົງ

* ແລ້ວກໍ່ຫັນອ້າຍຫນ້າ ມາກ່າວຄວາມຈິງ
ຕໍ່ເອື້ອຍລືມພວມງົງ ຢູ່ຮຽງຄຽງຂ້າງ
ນ້ຳໃຈພວມເນົ້ານ້ງ ນ້ອງຊາຍຕາຕື່ນ
ນ້ອງສາວຈາອວດອ້າງ ຊາຍນີ້ແມ່ນເຂົາ

* ເຂົ້າຜູ່ມາຊອຍຟື້ນ ຊຶບແມ່ດິນມາ
ເຂົ້າຜູເອົາໂລຫິດ ອອກໃນວັນນີ້
ນ້ຳໃຈອຽງອາຍອາຍ ຫລົບຕາລົງຕ່ຳ
ເພາະວ່າຊາຍຜູ້ນີ້ ຄືຊູ້ຮັກນາງ ທັ້ນແລ້ວ

* ເຂົ້າລ່ຳຈ້ອງ ນາງແຮ່ງອຽງອາຍ
ສຳນຶກຄືນຄວາມຫລັງ ຫວ່າງແລງເຕືອນຮູ້
ອາຍເພາະຕົນເຄີຍທ້ານ ໃນທາງຜິດພາດ
ບັດນີ້ນາງຮຸ່ງຮູ້ ເຫັນແຈ້ງສ່ອງໃສ ແທ້ແລ້ວ

ຮາງວັນດີເດັ່ນ
ກວດສອບວັນນະຄະດີ (ວັນນະສິນປີ ໑໙໙໐ )
ລົງພິມຄັ້ງທຳອິດໃນວັນນະສິນ
ສະບັບເດືອນ ກຸ/໑໙໙໑

# ນິທານກ່ຽວກັບ ຕົ້ນພ້າວ

* ຕົ້ນໝາກພ້າວຕົ້ນນີ້  ສູງສີ່ວາປາຍ
ມີອາຍຸ  ແປດປີປາຍແລ້ວ
ບົນປາຍພ້າວ  ມີແຊງຊອນກາບ
ມີໝາກແຫ້ງ  ແຊມຊອນໝາກຂຽວ

* ຍາມ ເມື່ອ ລົມພັດກ້ຽວ  ກ້ານແກວ່ງໄປມາ
ແລງາມຕາ  ດັ່ງນາງສາວຟ້ອນ
ອອນຊອນແຫ້  ແລໃບພ້າວແກວ່ງ
ແຊງໝາກພ້າວ  ໜັກຕົ້ງບໍ່ຕິງ

* ມື້ໜຶ່ງນັ້ນ　　　ມີສິ່ງເປັນໄປ
ຊາຍກາງຄົນ　　　ແບກຂວານມາປ້ຳ
ຄົມຂວານຈ້ຳ　　　ລຳກົມດັງສະໜັ່ນ
ແຊງໝາກພ້າວ　　　ເທິງຕົ້ນສັ່ນສະເທືອນ

* ເໝືອນດັ່ງແກ້ງ　　　ໝາກແກ່ເທິງປາຍ
ເລີຍລາແຊງ　　　ຫລົ່ນລົງໄລຂັ້ນ
ຕົກຈາກເທິງປາຍພ້າວ　　　ລົງມາທາງລຸ່ມ
ໂຍນໃສ່ຫົວຜູ້ປ້ຳ　　　ຂວານຟົ້ງຫລຸດມື.

ພິມຄັ້ງທຳອິດໃນວັນນະສິນ
ສະບັບເດືອນ 11/1991

# ຕຳນານຮັກ ຂອງ
# ນົກຈອກ ແລະ ດອກໄຟ

* ມື້ໜຶ່ງ ນົກຈອກນ້ອຍ　　ລອຍລ່ອງລົມແລງ
ແຍງເສົາສູງ　　ສູ່ສາຍໄຟຟ້າ
ທັກວ່າ ສະບາຍດີບໍ້　　ຈໍ່ແຈສຽງໃສ່
ດອກໄຟມິດບໍ່ເວົ້າ　　ຄືສາວນ້ອຍນົກອາຍ

* ນົກຈອກຫຍັບເຂົ້າໃກ້　　ຈື່ມໃສ່ໃນຫູ
ຕອບແດກູສາວງາມ　　ພີ່ຖາມໄດ້ຍິນບໍ້
ນົກຈອກຈໍ່ແຈຕານ　　ຂານເອີ້ນເປັນຄູ່
ດອກໄຟຄືບໍ່ຮູ້　　ຫູນ້ອຍດັ່ງບໍ່ຍິນ

* ຍັງມີຄົນຢູ່ໃຕ້ ຕາສ່ອງຕາມສຽງ
ຍິນສຳນຽງຂອງນົກ ບໍ່ຊ່າງແປຄວາມໄດ້
ປົດປຶ້ມລົມໄວ້ຟ້າວ ເອົາມາຄົ້ນບ່າ
ກະວ່າແມ່ນແມ່ແລວ ມີໄລ້ໃສ່ໄກ

* ດອກໄຟຣັບເຄາະຮ້າຍ ຕາງບ່າວສີກຫຼູ້ນາ
ຈົນວ່າຊີວາວາຍ ຮ່າງກາຍສູນສິ້ນ
ນົກຈອກຍິນກະສັນເສົ້າ ເຫງົາປານເປັນປ່ວຍ
ດອກໄຟວາງຊີບມ້ວຍ ຖວາຍໃຫ້ຮັກຈິງ

* ຕໍ່ແຕ່ນັ້ນ ນົກຈອກບໍ່ໄປໃສ
ບິນໄປມາ ຢູ່ວຽງຫວັງໃກ້
ແມ່ນວ່າອັນຕະລາຍລົ້ມ ບໍ່ຄິດເມີນໃນປ່າ
ແຕ່ວານົກຈອກນ້ອຍ ຍັງກຽວຢູ່ວຽງ ເບິ່ງແມ່ !

ພິມຄັ້ງທຳອິດ ໃນວັນນະສິນ
ສະບັບເດືອນ ໔ / ໑໙໘໔

# ສົມກັບເວລາ

* ເວລາເອີຍເຈົ້າມັ້ນ ລ້ຽງແກ່ນກັບທຽມ ບໍ່ນໍ ?
ທຽມສະຫນິດເວລາ ຜ່ານມານານແລວ
ໃຜກໍ່ວ່າງ ເວລານີ້ ມີຄຸນຄ່າມາກ
ຄົນດັ່ງຂ້ອຍ ຄວນຮູ້ ຄ່າຄຸນ ແມ່ນບໍ່ ?

* ຂ້ອຍຍັງຮູ້ວ່າເຈົ້າ ຄັດເຄັ່ງເຫລືອຫລາຍ
ເຈົ້າບໍ່ຫມາຍຜິດນັດ ຕໍ່ໃຜພໍ້ດ
ແຕ່ບໍ່ຍອມຄອຍຖ້າ ຂຸນຄົນນອນບໍ່ຕື່ນ
ເຈົ້າບໍ່ເຄີຍຕ່າວປິ້ນ ຄືນໂຄ້ງຫວ່ງຫລັງ

* ເວລາເອີຍເຈົ້ານັ້ນ ລົ້ງແກ່ນກັບຮຽນ ບໍ່ ?
ຮຽນສະໜິດເວລາ ຜ່ານມານານແລວ
ເຮົາຈຶ່ງມາເສີມສ້າງ ໄມຕີພັນຜູກ
ຂ້ອຍຈັກຂັນແຂ່ງເຈົ້າ ເສີມສ້າງສິ່ງດີ







ເກີດແກ່ວກ້າ ຖານຖິ່ນດິນມາ
ນາຄູນຄື ຊື່ແດນດິນບ້ານ
ເກີດໃນວັນທີ້ຫາ ເມຖຸນແຖມໃສ່
ໃນ ຄ.ສ.ໜຶ່ງເກົ້າ ທິກສອງພຸ້ນຜ່ານມາ

ການຣຽນພຽງຜ່ານພົ້ນ ຫຼັກສູດສາມັນ
" ວັນນະສິນ" ຄື ບ່ອນທຳງານຂ້ອຍ
ຄວາມຫວັງແທ້ ໃຈຈິງແນໃສ່
ອາຊີບດຽວທີ່ຂ້ອຍ ຫວັງໄວ້ແມ່ນ "ຄູ"